Minnesota Department of Health

# ການແຜ່ຂະຍາຍຂອງເຊື້ອວັນນະໂຣຄ໌

ຖ້າທ່ານກວດພົບວ່າທ່ານມີ ເຊື້ອວັນນະໂຣຄທີ່ສາມາດຕິດ ຕໍ່ສູ່ຜູ້ອື່ນໄດ້, ຂໍ້ມູນຕ່າງໆທີ່ທ່ານຄວນຈະຮູ້ມີດັ່ງຕໍ່ລົງໄປນີ້:

- ເຊື້ອວັນນະໂຣຄເປັນພຍາດທີ່ອັນຕະລາຍ**ແຕ່ສາມາດຮັກສາໄດ້** ຖ້າ**ຮັກສາ**ຖືກວິທີທາງແລະມີຢາປິ່ນປົວທີ່ດີ.
- ຜູ້ທີ່ມີ ເຊື້ອວັນນະໂຣຄບາງຄົນສາມາດທີ່ຈະແຜ່ລະບາດ ເຊື້ອວັນນະໂຣຄ ໄປຫາຜູ້ອື່ນໄດ້ໂດຍງ່າຍ.

## ຂ້ອຍຕິດ ເຊື້ອວັນນະໂຣຄໄດ້ຢ່າງໃດ?

ທຸກຄົນສາມາດຕິດ ເຊື້ອວັນນະໂຣຄໄດ້, ເມື່ອຜູ້ມີເຊື້ອໂຣກປອດເຫ້ງໃນປອດນັ້ນໄອ, ຈາມ, ຫຼືປາກເວົ້າ, ເຊື້ອວັນນະໂຣຄນັ້ນຈະກະຈາຍ ຫຼືປິວໄປຕາມລົມອອກມາສູ່ອາກາດພາຍນອກ. ຜູ້ທີ່ຢູ່ໃກ້ກໍສາມາດທີ່ຈະຫາຍໃຈເອົາ ເຊື້ອວັນນະໂຣຄເຂົ້າໄປໃນປອດຂອງເຂົາ. ທ່ານຈະບໍ່ຕິດເຊື້ອໂຣກປອດເຫ້ງໄດ້ຈາກການຈັບມື, ຫຼືຈາກອາຫານ, ຖ້ວຍຊາມ, ຜ້າແພຫຼື ສິ່ງຂອງຕ່າງໆ.



ໃນເມື່ອ ເຊື້ອວັນນະໂຣຄເຂົ້າໄປຢູ່ໃນຮ່າງກາຍຂອງທ່ານ, ມັນຈະ “ຝັກຕົວຢູ່” ນີ້ເອີ້ນວ່າ “**latent TB infection**” ຫຼືຊື່ ຫຍໍ້ວ່າ “**LTBI**” “ໃນລະຍະການຝັກຕົວຢູ່” ຂອງ ເຊື້ອ ວັນນະໂຣຄ ມັນຍັງບໍ່ທັນເປັນອັນ ຕະລາຍຕໍ່ຮ່າງກາຍເທື່ອ ຫຼືເຮັດໃຫ້ທ່ານປ່ວຍໄຂ້ໄດ້ເທື່ອ. ການຝັງຕົວນອນຢູ່ຂອງເຊື້ອໂຣກນີ້ອາດຈະບໍ່ດົນ ຫຼືອາດຈະດົນຫຼາຍປີ. ທ່ານຈະເຈັບປ່ວຍໄຂ້ຈາກ ເຊື້ອ ວັນນະໂຣຄ ນີ້ເມື່ອເຊື້ອໂຣກ“ຟື້ນຕົວຂື້ນ” ແລະກໍ່ຕົວໃຫ່ຍຂື້ນແລະມັນກໍຈະສາມາດທຳຮ້າຍຮ່າງກາຍຂອງທ່ານ. ນີ້ເອີ້ນວ່າ **ການແຜ່ ຂະຍາຍຂອງເຊື້ອວັນນະໂຣຄ.**

## ເຊື້ອວັນນະໂຣຄມີຜົນສະທ້ອນຕໍ່ຮ່າງກາຍຢ່າງໃດ?

ເຊື້ອວັນນະໂຣຄນັ້ນຕາມປົກກະຕິມັນຈະມີຜົນສະທ້ອນຕໍ່ປອດ ຂອງທ່ານ (pulmonary TB). ເຊື້ອວັນນະໂຣຄຍັງຈະ ທຳຮ້າຍຕໍ່ອະວັນຍະວະຕ່າງໆຂອງຮ່າງກາຍຄືກັນ.




ຈຸດຕ່າງໆທີ່ເຊື້ອວັນນະໂຣຄ໌ມັກເກີດຕິດເຊື້ອໂຣຄ໌

ຜູ້ທີ່ມີ ເຊື້ອວັນນະໂຣຄນັ້ນອາດຈະມີອາການຕ່າງໆ ຢ່າງນ້ອຍກໍເປັນນື່ງອາການຫາຫຼາຍ**ອາການຕ່າງໆ**ເຫຼົ່ານີ້ເຊັ່ນ:

- ໄອຕິດຕໍ່ກັນເຖິງສອງສາມອາທິດຫຼືຫຼາຍກວ່ານັ້ນ
- ຈ່ອຍລົງ, ນ້ຳໜັກລຸດລົງ
- ກິນເຂົ້າບໍ່ແຊບ
- ມີເຫື່ອອອກຕອນກາງຄືນ
- ເປັນໄຂ້
- ເປັນໜາວ
- ຮູ້ສືກອ່ອນເພັຍຫຼືບໍ່ມີເຫື່ອແຮງ
- ເຈັບທີ່ໜ້າເອິກ
- ໄອອອກເປັນເລືອດຫຼືມີສິ່ງໃດ ສິ່ງນື່ງທີ່ເປັນສີນ້ຳຕານຕິດອອກມາ

## ທ່ານໝໍກວດ ເຊື້ອວັນນະໂຣຄດ້ວຍວິທີໃດ?

ທ່ານອາດຈະຕ້ອງກວດເບິ່ງ ເຊື້ອວັນນະໂຣຄນັ້ນຢ່າງນ້ອຍກໍຫຼາຍກວ່ານື່ງເທື່ອ:

- ການກວດແບບ**ສັກເຊື້ອຢາຝັງໄວ້ທີ່ໃຕ້ຜິວໜັງ** ນີ້ສາມາດຈະຮູ້ໄດ້ວ່າທ່ານມີ ເຊື້ອວັນນະໂຣຄ ຢູ່ໃນຮ່າງກາຍຫຼືບໍ່. ເຖິງ ແມ່ນວ່າເຊື້ອໂຣກນັ້ນຍັງ "ນອນຝັງຕົວ" ກໍຕາມ.
- **ການສ່ອງໄຟຟ້າ**ຈະບອກໃຫ້ຮູ້ວ່າເຊື້ອໂຣກນັ້ນໄດ້ທຳຮ້າຍປອດຂອງທ່ານແລ້ວຫຼືບໍ່.
- **ການກວດຈາກຂີ້ກະເທີ່ແບບສມັຍເກົ່ານັ້ນ** ຈະບອກໃຫ້ ຮູ້ວ່າເຊື້ອວັນນະໂຣຄນັ້ນໄດ້ ກໍ່ຕົວໃຫ່ຍຂື້ນໃນປອດຂອງທ່ານ ແລ້ວຫຼືຍັງ.

## ຂ້ອຍຈະດີຂື້ນໄດ້ຢ່າງໃດ?

- ທ່ານຕ້ອງໄປຫາແພທແລະ**ກິນຢາຕ້ານ ເຊື້ອວັນນະໂຣຄ** ເປັນພິເສດເພື່ອຈະໄດ້ຂ້າເຊື້ອໂຣກນັ້ນ.
- **ເຊື້ອວັນນະໂຣຄນັ້ນມີພິດແຮງ** ແລະ ມັນມີຊີວິດຢູ່ດົນນານ. ທ່ານຈະຮູ້ສຶກດີຂື້ນພາຍໃນສອງອາທິດຫຼັງຈາກທ່ານກິນຢາຕ້ານເຊື້ອວັນນະໂຣຄ. ເພື່ອໃຫ້ແນ່ໃຈວ່າ ເຊື້ອວັນນະໂຣຄໄດ້ຖືກຂ້າໝົດ, **ທ່ານຈະຕ້ອງໄດ້ກິນຢາສືບຕໍ່ໄປ**ຢ່າງນ້ອຍ 6-9 ເດືອນ.
- **ມັນເປັນສິ່ງສຳຄັນທີ່ຕ້ອງໄປພົບທ່ານໝໍທຸກເດືອນ** ຈົນກ່ວາການຮັກສາ ເຊື້ອວັນນະໂຣຄຂອງທ່ານຫາຍດີເປັນປົກກະຕິ. ແພທຈະກວດເບິ່ງອີກເພື່ອໃຫ້ແນ່ໃຈວ່າທ່ານດີຂື້ນຫຼືຖ້າທ່ານມີບັນຫາໃນການຢາກິນຫຼືມີຄຳຖາມອື່ນໆ.

## ຈະເປັນຢ່າງໃດຖ້າຂ້ອຍບໍ່ຢາກກິນຢາຮັກສາ?

ເຊື້ອວັນນະໂຣຄ ຈະເປັນແຮງຂື້ນ. ຖ້າທ່ານບໍ່ກິນຢາຖືກ ວິທີການ ຫຼືບໍ່ກິນໃຫ້ໝົດຕາມຄຳສັ່ງຂອງທ່ານໝໍ. ທ່ານອາດຈະ **ເລີ່ມ ປ່ວຍໄຂ້ອີກ ແລະແຜ່ເຊື້ອໂຣກ**ນັ້ນໄປໃສ່ຜູ້ອື່ນ.

ທ່ານຕ້ອງ **ກິນຢາໃຫ້ໝົດ** ແລະປະຕິບັດຕາມຕາມຄຳສັ່ງຂອງທ່ານໝໍເພື່ອຈະໄດ້ດີຂື້ນ. ຖ້າທ່ານບໍ່ກິນຢາຖືກຕ້ອງຕາມວິທີຫຼືຕາມຄຳສັ່ງຂອງທ່ານໝໍ, ເຊື້ອວັນນະໂຣຄຂອງທ່ານອາດຈະກໍ່ຕົວ ແຮງຂື້ນ. ເຖິງເວລານັ້ນທ່ານຈະໄດ້ກິນຢາຮັກສາທີ່ແຮງແລະຈະ ຕ້ອງໃຊ້ເວລາຮັກສາຍາວນານ.

# ການແຜ່ຂະຍາຍຂອງເຊື້ອວັນນະໂຣຄ - ໜ້າທີ 2

**DOT ໝາຍເຖິງຫຍັງ?**

"DOT" ໝາຍເຖິງການກຳກັບເບິ່ງອາການໂດຍກົງ. DOT ຈະເຮັດໃຫ້ການກິນຢາງ່າຍຂື້ນ, DOT ແມ່ນເວລານາຍແພທ ຫຼືນາງພຍາບານພົບກັບທ່ານໃນທຸກໆທີ່ເອົາຢາແກ້ເຊື້ອວັນນະໂຣຄ ປອດເເຫ້ງ ໃຫ້ທ່ານກິນ. ນີ້ແມ່ນວິທີທາງງ່າຍໆແບບນື່ງທີ່ຈະຊ່ວຍ ໃຫ້ທ່ານໄດ້ກິນຢາຂອ ງທ່ານຈົດໝົດຕາມກຳນົດແລະອາການກໍຈະດີຂື້ນ ຖ້າຫາກມີບັນຫາກັບຢາກິນ ເພີ່ນກໍສາມາດທີ່ຈະປ່ຽນຢາໃຫ່ມໃຫ້ ທ່ານທັນທີ.

**DOT ຈະປີ່ນປົວເຊື້ອວັນນະໂຣຄໄດ້!**

## ຂ້ອຍຈະແຜ່ ເຊື້ອວັນນະໂຣຄໄປໃສ່ຜູ້ອື່ນໄດ້ຢ່າງໃດ?

ຖ້າ ເຊື້ອວັນນະໂຣຄຫາກຢູ່ໃນປອດຂອງທ່ານແລ້ວ, ທ່ານຈະຕ້ອງ ລະວັງເພື່ອບໍ່ໃຫ້ຜູ້ອື່ນຕິດ ເຊື້ອວັນນະໂຣຄຈາກທ່ານ. ຖ້າເຊື້ອ ວັນນະໂຣຄ ຫາກຢູ່ຕາມພາກສ່ວນຕ່າງໆຂອງຮ່າງກາຍ ຕາມປົກກະຕິແລ້ວ ມັນຈະບໍ່ ແຜ່ໄປ ໃສ່ຜູ້ໄດ້.

ໃຫ້ຖາມນຳທ່ານໝໍຫຼືນາງພຍາບານ ວ່າ ເຊື້ອວັນນະໂຣຄຂອງທ່ານ ນີ້ສາມາດແຜ່ໃສ່ຜູ້ອື່ນໄດ້ບໍຫຼື (ຕິດລະບາດ). ເພີ່ນຈະ ແນະນຳວິທີ ການປະຕິດບັດ ເພື່ອບໍ່ໃຫ້ຜູ້ອື່ນທີ່ຢູ່ໃກ້ທ່ານຕິດເຊື້ອໂຣກນີ້ໄດ້.

ຫຼັງຈາກທ່ານກິນຢາໄດ້ສອງສາມອາທິດແລ້ວ ແລະຮູ້ສຶກດີຂື້ນ ທ່ານບໍ່ສາມາດທີ່ຈະແຜ່ເຊື້ອໂຣກປອດເເຫ້ງນັ້ນໃສ່ ຜູ້ອື່ນໄດ້. ນາຍແພທຈະບອກທ່ານວ່າທ່ານຄວນຈະກັບໄປທຳງານ, ໂຮງຮຽນ, ຫຼືທຳກິຈະກັມອື່ນໆໄດ້.

## ຂ້ອຍຈະຮູ້ເຣື່ອງເຊື້ອວັນນະໂຣຄ໌ເພີ່ມຕື່ມໄດ້ຢູ່ໃສ?

- ໃຫ້ຖາມນຳນາຍແພທ ຫຼືນາງພຍາບານເພື່ອຂໍເອົາຂໍ້ມູນ **ເຣື່ອງ ເຊື້ອວັນນະໂຣຄ໌ ໄດ້ຟຣີ** ຈາກກະຊວງສາທາຣະນະສຸກ ຣັຖມິນນີໂຊ ຕາ.
- ໃຫ້ບອກທ່ານໝໍຫຼືນາງພຍາບານຂອງທ່ານ ຖ້າທ່ານມີແຜນການ ທີ່ຈະຍົກຍາຍໄປຢູ່ຕ່າງເມືອງຫຼືຕ່າງຣັຖ. ເພີ່ນຈະໄດ້ຊ່ວຍທ່ານ ບ່ອນໄປເອົາຢາ ຫຼັງຈາກທ່ານຍ້າຍໄປຢູ່ບ່ອນໃຫ່ມ.
- ຖ້າທ່ານມີເຊື້ອວັນນະໂຣຄ໌, ໃຫ້ຖາມນຳນາຍແພທເພື່ອຂໍໃຫ້ ກວດຫາ ເຊື້ອໂຣກເອັສນຳ. ຜູ້ທີ່ມີເຊື້ອໂຣກເອັສໃນຮ່າງກາຍຈະ ປ່ວຍ ໃຂ້ແລະແຮງກວ່າ ຖ້າມີເຊື້ອວັນນະໂຣຄນຳ, ທ່ານຈະ

**ໃຫ້ຈື່ວ່າ ໂຣກປອດເເຫ້ງສາມາດຮັກສາໄດ້ !**

## ຢາຮັກສາໂຣກປອດເເຫ້ງມີຢາຫຍັງແດ່ທີ່ຂອ້ຍຄວນຮູ້ຈັກ?

- ຢາຮັກສາໂຣກປອດເເຫ້ງເປັນຢາກິນທີ່ປອດພັຍ, ແຕ່ບາງຄົນ ອາດຈະກໍ່ໃຫ້ເກີດມີອາການຕ່າງໆ, **ໃຫ້ໂທຣສັບໄປຫາ ນາຍແພທຂອງທ່ານທັນທີ ຖ້າທ່ານມີອາການດັ່ງຕໍ່ໄປນີ້ເຊັ່ນ:**
  - ຮາກ, ເຈັບທອ້ງ
  - ກິນເຂົ້າບໍ່ແຊບ
  - ວິ່ງວຽນ
  - ຕາເຫຼືອງ ຫຼື ຜິວເຫຼືອງ
  - ສຽວທີ່ນີ້ວມືຫຼືທີ່ນີ້ວຕີນ
  - ສຽວຫຼືມືນປາກ
  - ມົວຕາ ຫຼື ສາຍຕາຟາງ
  - ສຽງກ້ອງຢູ່ໃນຫູ
  - ຫູບໍ່ໄດ້ຍິນດີ
  - ວິນຫົວ
  - ປວດຕາມຂໍ່ກະດູກ
  - ເປັນໄຂ້ຫຼາຍກວ່າ 3 ວັນ
  - ເປັນຜື່ນແດງຕາມຜິວໜັງ
  - ເລືອດອອກງ່າຍຫຼືມີຮອຍຟົກຊ້ຳງ່າຍ
- ກິນຢາຮັກສາ ເຊື້ອວັນນະໂຣຄຂອ**ງທ່ານເຫຼົ່ານັ້ນໃຫ້ກົງເວລາ ຂອງທຸກໆມື້.**
- ກິນຢາຮັກສາ ເຊື້ອວັນນະໂຣຄໄປຈົນກວ່າທ່ານໝໍຈະບອກໃຫ້ ທ່ານເຊົາ.
- **ຫ້າມບໍ່ໃຫ້ດື່ມເບັຍ, ເຫຼົ້າວາຍ, ຫຼືເຫຼົ້າ** ໃນຂນະທີ່ກິນຢາຮັກສາໂຣກ ປອດເເຫ້ງນີ້.

ຄລີນິກຂອງທ່ານ/ທ່ານໝໍ/ນາງພຍາບານ:

________________________________________

________________________________________

ໂທຣສັບ #: (_____)______________________

**ຢາຮັກສາໂຣກປອດເເຫ້ງມີຄື:**

___ Isoniazid ("INH")
___ Rifampin
___ Pyrazinamide ("PZA")
___ Ethambutol
___ Vitamin B6
___ ________________
___ ________________

MINNESOTA MDH DEPARTMENT OF HEALTH
Tuberculosis Prevention and Control Program
P.O. Box 64975
St. Paul, MN 55164-0975
651-201-5414
1-877-676-5414
www.health.state.mn.us/tb

6/2005